**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 0159/ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 15 ກຸມພາ 2023

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

**ເລື່ອງ:** ແຈ້ງປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 168/ຄປຈ, ລົງວັນທີ 06 ມິຖຸນາ 2022.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 631/ຫສນຍ, ລົງວັນທີ 09 ພຶດສະພາ 2022.
- ອີງຕາມ ໜັງສືສະເໜີ ກ່ຽວກັບ ການປັບຫຼຸດອັດຕາອາກອນຊົມໃຊ້ຈາກນ້ຳມັນເຊື້ອໄຟ ສະບັບເລກທີ 3654/ຫກ, ລົງວັນທີ 14 ທັນວາ 2022.
- ອີງຕາມ ແຈ້ງການສະບັບເລກທີ 134/ຫສນຍ, ລົງວັນທີ 01 ກຸມພາ 2023, ທີ່ດຊີ້ນຳກ່ຽວກັບການມອບ ໃຫ້ກົມວິຊາການ (ກົມການຄ້າພາຍໃນ) ເຊັນແຈ້ງການປັບລາຄານ້ຳມັນເຊື້ອໄຟແຕ່ລະໄລຍະ.
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງທ່ານຊາບ ແລະ ປະຕິບັດ ດັ່ງນີ້:**

1. ປັບຂຶ້ນສະເພາະລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ຄື: ນ້ຳມັນແອັດຊັງພິເສດ ປັບຂຶ້ນ 460 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບຂຶ້ນ 330 ກີບ/ລິດ.

ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງວຽງຈັນ:

ຫົວໜ່ວຍ:ລິດ.

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ປະຈຸບັນ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 26,050 | 26,510 | 460 | 1,77 | |
| 2 | ອຊ ທຳມະດາ | 20,730 | 21,060 | 330 | 1,59 | |
| 3 | ກາຊວນ | 18,590 | 18,590 | - | - | |

**(ສຳລັບລາຄາຂາຍຍ່ອຍເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).**

2. ລາຄາໃໝ່ນີ້ ແມ່ນໃຫ້ເລີ່ມປະຕິບັດວັນທີ 16 ກຸມພາ 2023, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0160/ກຄພນ, ລົງວັນທີ 15 ກຸມພາ 2023 ຈົນກວ່າຈະມີການປ່ຽນແປງ.
4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
5. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0126/ກຄພນ, ລົງວັນທີ 08 ກຸມພາ 2023.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມ

ພູວຽງ ພົງສາ

**ບ່ອນສົ່ງ:**

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປໍ້ານໍ້າມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 16 ກຸມພາ 2023, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | **26,510** | **21,060** | **18,590** |
| 2 | ແຂວງຜົ້ງສາລີ | **27,500** | **22,050** | **19,580** |
| 3 | ແຂວງຫຼວງນໍ້າທາ | **27,000** | **21,560** | **19,080** |
| 4 | ແຂວງອຸດົມໄຊ | **27,180** | **21,730** | **19,260** |
| 5 | ແຂວງບໍ່ແກ້ວ | **26,610** | **21,160** | **18,690** |
| 6 | ແຂວງຫຼວງພະບາງ | **27,010** | **21,570** | **19,100** |
| 7 | ແຂວງໄຊຍະບູລີ | **26,830** | **21,390** | **18,920** |
| 8 | ແຂວງຫົວພັນ | **27,010** | **21,570** | **19,100** |
| 9 | ແຂວງຊຽງຂວາງ | **26,700** | **21,250** | **18,780** |
| 10 | ແຂວງວຽງຈັນ | **26,510** | **21,060** | **18,590** |
| 11 | ແຂວງບໍລິຄຳໄຊ | **26,620** | **21,180** | **18,710** |
| 12 | ແຂວງຄຳມ່ວນ | **26,540** | **21,090** | **18,620** |
| 13 | ແຂວງສະຫວັນນະເຂດ | **26,540** | **21,090** | **18,620** |
| 14 | ແຂວງສາລະວັນ | **26,790** | **21,350** | **18,880** |
| 15 | ແຂວງຈຳປາສັກ | **26,570** | **21,120** | **18,650** |
| 16 | ແຂວງເຊກອງ | **26,790** | **21,350** | **18,880** |
| 17 | ແຂວງອັດຕະປື | **26,840** | **21,390** | **18,920** |
| 18 | ແຂວງໄຊສົມບູນ | **26,930** | **21,480** | **19,020** |

ນະຄອນຫຼວງວຽງຈັນ, ວັນທີ 15 ກຸມພາ 2023

**ຫົວໜ້າກົມ**

ພູວຽງ ພົງສາ